International
Labour
Organization

# ວຽກໃນຄົວເຮືອນ: ວຽກທີ່ມີກຽດ ແລະ ມີຄຸນຄ່າ

"ປື້ມຄູ່ມື" ສຳລັບຜູ້ອອກແຮງງານໃນຄົວເຮືອນ ຢູ່ປະເທດໄທ

** ພາສາລາວ**



ເພື່ອສົ່ງເສີມວຽກເຮັດງານທຳ ທີ່ໄດ້ຮັບການເຄົາລົບນັບຖື ແລະ ມີຄຸນຄ່າ
ສຳລັບຜູ້ອອກແຮງງານໃນຄົວເຮືອນ ທີ່ເຮັດວຽກຢູ່ປະເທດໄທ

ລິຂະສິດ ອົງການແຮງງານສາກົນ 2009
ພິມຄັ້ງທຳອິດ 2009

ປຶ້ມພິມຂອງຫ້ອງການອົງການແຮງງານສາກົນໄດ້ຮັບການປົກປ້ອງລິຂະສິດພາຍໃຕ້ອະນຸສັນຍາເລກທີ2 ຂອງສົນທິສັນຍາວ່າດ້ວຍລິຂະສິດສາກົນ. ເຖິງຢ່າງໃດກໍ່ຕາມ, ອາດຈະອະນຸຍາດໃຫ້ຄັດຈ້ອນເອົາເນື້ອໃນສັ້ນໆຈາກບັນດາປຶ້ມພິມຕ່າງໆເຫຼົ່ານີ້ນໍາໄປໃຊ້ໄດ້ ສໍາລັບສິດໃນການພິມຄືນ ຫຼື ແປອອກເປັນພາສາອື່ນນັ້ນ, ຄວນສົ່ງຄໍາຮ້ອງໄປຫາສະພະແນກຈັດພິມ (ສິດແລະອະນຸຍາດ) ການຈັດພິມ ທີ່ຫ້ອງການອົງການແຮງງານສາກົນ, CH-1211 Geneva22, Switzerland ຫລື ສົ່ງອີເມວ ໄປທີ່ pubdroit@ilo.org. ຫ້ອງການອົງການແຮງງານສາກົນ ຍິນດີຮັບຄໍາຮ້ອງໃນລັກສະນະດັ່ງກ່າວ. ບັນດາຫໍສະມຸດ, ສະຖາບັນຕ່າງໆ ແລະ ຜູ້ນໍາໃຊ້ອື່ນໆ ທີ່ໄດ້ຂຶ້ນທະບຽນກັບອົງການທີ່ໄດ້ຮັບສິດໃນການຈັດພິມແມ່ນອາດສາມາດໄດ້ຮັບອະນຸຍາດໃຫ້ເຮັດສໍາເນົາໂດຍໃຫ້ສອດຄ່ອງກັບໃບອະນຸຍາດທີ່ໄດ້ອອກໃຫ້ເພື່ອການນີ້ໂດຍສະເພາະ. ກະລຸນາເຂົ້າຫາລາຍລະອຽດກ່ຽວກັບອົງການຕ່າງໆທີ່ໄດ້ຮັບສິດນີ້ທີ່ປະເທດຂອງທ່ານດັ່ງນີ້: www.ifrro.org

---

ວຽກໃນເຮືອນ ວຽກງານທີ່ມີຄຸນຄ່າ-ເປັນທໍາ: ປຶ້ມຄູ່ມື ສໍາລັບຜູ້ອອກແຮງງານໃນເຮືອນ ຢູ່ປະເທດໄທ / ອົງການແຮງງານສາກົນ; ຫ້ອງການແຮງງານສາກົນ ປະຈໍາພາກພື້ນອາຊີ ຕາເວັນອອກ - ກຸງເທບ 2009
23 p.

ISBN: ISBN 9789228229721, 9789228229738 (web pdf)

ຫ້ອງການ ອົງການແຮງງານສາກົນ ປະຈໍາພາກພື້ນອາຊີ ຕາເວັນອອກ

domestic worker / decent work / workers rights / working conditions / Thailand

13.11.6

ພ້ອມນີ້ຍັງໄດ້ຈັດພິມເປັນພາສາມຽນມາ (ISBN 9789228229707, 9789228229714 (web pdf)), ບາງກອກ, 2009,
in English (9789221229704; 9789221229711 (web pdf)), Bangkok, 2009,
ພາສາໄປກະຫລ່ຽງ (ISBN 9789228229745, 9789228229752 (web pdf)), ບາງກອກ, 2009,
ພາສາສານ (ISBN 9789228229769, 9789228229776 (web pdf)), ບາງກອກ, 2009,
ພາສາ ສາໄກ ກະຫລ່ຽງ (ISBN 9789228231373, 978922831380 (web pdf)), ບາງກອກ, 2009,
ພາສາໄທ (ISBN 9789228229783, 9789228229790 (web pdf)), ບາງກອກ, 2009.

*ILO Cataloguing in Publication Data*

---

ບັນດາສິ່ງທີ່ກ່າວອ້າງໃນປຶ້ມພິມຂອງອົງການ ILO (ເຊິ່ງສອດຄ່ອງກັບວິທີປະຕິບັດຂອງອົງການສະຫະປະຊາຊາດ) ແລະ ການນໍາສະເໜີເນື້ອໃນຕ່າງໆ ໃນປຶ້ມພິມແມ່ນບໍ່ໄດ້ໝາຍເຖິງການສະແດງຄໍາຄິດເຫັນໃດໆ ທັງນີ້ຈາກພາກສ່ວນຫ້ອງການອົງການແຮງງານສາກົນ ກ່ຽວກັບສະຖານະພາບທາງກົດໝາຍປະເທດຂອງປະເທດ, ພື້ນເຂດ ຫຼື ຂອບເຂດການປົກຄອງໃດໜຶ່ງ ຫຼື ກ່ຽວກັບອໍານາດການປົກຄອງຂອງປະເທດ, ພື້ນເຂດ ຫຼື ຂອບເຂດການປົກຄອງດັ່ງກ່າວ, ຫຼື ກ່ຽວຂ້ອງກັບການກໍານົດຊາຍແດນຂອງປະເທດ, ພື້ນເຂດ ຫຼື ຂອບເຂດການປົກຄອງດັ່ງກ່າວ.

ຄວາມຮັບຜິດຊອບຕໍ່ບັນດາຄໍາຄິດເຫັນຕ່າງໆ ທີ່ສະແດງໃນບົດຄວາມ, ບົດສຶກສາ ແລະ ບົດປະກອບສ່ວນຕ່າງໆ ທີ່ຖືກລົງນາມນັ້ນ ຕົກເປັນຂອງຜູ້ຂຽນບົດຄວາມ, ບົດສຶກສາ ແລະ ບົດປະກອບສ່ວນເຫຼົ່ານັ້ນແຕ່ພຽງຜູ້ດຽວ, ພ້ອມດຽວກັນນັ້ນ ການພິມເຜີຍແຜ່ບົດຂຽນເຫຼົ່ານັ້ນ ກໍ່ບໍ່ໄດ້ລວມເອົາການຮັບຮອງຈາກຫ້ອງການອົງການແຮງງານສາກົນຕໍ່ຄໍາຄິດເຫັນຕ່າງໆ ທີ່ສະແດງໃນບົດຂຽນເຫຼົ່ານັ້ນ. ການກ່າວອ້າງເຖິງຊື່ຂອງບັນດາບໍລິສັດ, ຜະລິດຕະພັນການຄ້າ ແລະ ຂະບວນການຕ່າງໆ ບໍ່ໄດ້ໝາຍເຖິງການຮັບຮອງເອົາສິ່ງເຫຼົ່ານັ້ນ ໂດຍຫ້ອງການອົງການແຮງງານສາກົນ, ແລະ ການທີ່ບໍ່ໄດ້ກ່າວເຖິງບໍລິສັດ, ຜະລິດຕະພັນການຄ້າ ຫຼື ຂະບວນການສະເພາະໃດໜຶ່ງ ກໍ່ບໍ່ແມ່ນສັນຍານຂອງການບໍ່ຮັບຮອງ.

ສາມາດຊອກຊື້ປຶ້ມພິມຕ່າງໆ ຂອງອົງການ ILO ໄດ້ນໍາຜູ້ຈໍາໜ່າຍປຶ້ມລາຍໃຫຍ່ທົ່ວໄປ ຫຼື ໄດ້ທີ່ ILO ປະຈໍາບັນດາປະເທດຕ່າງໆ ຫຼື ສັ່ງຊື້ໄດ້ໂດຍກົງຈາກສະພະແນກການຈຸ້ມຄອງການຈັດພິມ, ຫ້ອງການອົງການແຮງງານສາກົນ ທີ່ CH-1211 Geneva 22, Switzerland. ບັນຊີ ຫຼື ລາຍການປຶ້ມທີ່ຈະອອກມາໃໝ່ ແມ່ນມີສະໜອງໃຫ້ຟຣີ, ສາມາດຂໍເອົາໄດ້ຕາມທີ່ຢູ່ຂ້າງເທິງນັ້ນ ຫຼື ອີເມວໄປທີ່: pubvente@ilo.org

---

ບັນດາຮູບພາບ ແລະ ກາຕູນໄດ້ຮັບການເອື້ອເຟື້ອ ຈາກມູນນິທິ MAP, ຊຽງໃໝ່, ປະເທດໄທ
ພິມທີ່ປະເທດໄທ

## ທ່ານແມ່ນຜູ້ອອກແຮງງານໃນຄົວເຮືອນບໍ່?
## ຫລື ເວລານີ້ທ່ານກຳລັງຈະໄປຊອກເຮັດວຽກງານປະເພດນີ້ຢູ່?



## ທ່ານຄວນຮູ້ ສິດທິ ແລະ ໜ້າທີ່ຂອງທ່ານໄວ້!

ທ່ານແມ່ນສະມາຊິກທີ່ມີຄຸນປະໂຫຍດຜູ້ໜຶ່ງໃນຄົວເຮືອນ ເຊິ່ງມີສິດໄດ້ຮັບຄວາມສະດວກສະບາຍໃນການ ເຮັດວຽກຢ່າງມີຄຸນຄ່າ, ໄດ້ຮັບຄ່າແຮງງານຢ່າງ ເໝາະສົມ-ເປັນທຳ ແລະ ໄດ້ຮັບຄວາມເຄົາລົບນັບຖືຈາກທຸກຄົນໃນ ຄອບຄົວ ຂອງຜູ້ໃຊ້ແຮງງານເອງ ແລະ ທຸກຄົນຢູ່ສັງຄົມທົ່ວໄປ.

*ຈົ່ງຄິດຢູ່ສະເໝີວ່າ: ບຸກຄົນທີ່ເປັນຜູ້ປົກປ້ອງດູແລສິນປະໂຫຍດຂອງທ່ານ ທີ່ດີທີ່ສຸດກໍ່ຄືໂຕທ່ານເອງ!*

*ປຶ້ມຫົວນີ້ຈະມີຂໍ້ມູນທີ່ຊ່ວຍໃຫ້ທ່ານສາມາດປົກປ້ອງໂຕເອງໄດ້ດີຍິ່ງຂຶ້ນ*

*ກະລຸນາເບິ່ງເຄື່ອງໝາຍທີ່ຈະໄດ້ນຳໃຊ້ຢູ່ໃນປຶ້ມຫົວນີ້ດັ່ງນີ້:*



*ສີຂຽວບົ່ງບອກເຖິງສິ່ງທີ່ມີປະໂຫຍດ*



*ສີແດງ "X" ບອກເຕືອນໃຫ້ຮູ້ເຖິງໄພອັນຕະລາຍ*

**ເຖິງທ່ານຈະເປັນຄົນຕ່າງດ້າວ ຫຼືເປັນຄົນລາວ, ແມ່ຍິງ ຫລື ຜູ້ຊາຍ, ເປັນໜຸ່ມ ຫລື ເຖົ້າ ທ່ານກໍ່ມີໜ້າທີ່ຮັບຜິດຊອບ ແລະ ສິດທິ ເທົ່າທຽມກັນ!**

## ຜູ້ອອກແຮງງານໃນຄົວເຮືອນ

ແມ່ນບຸກຄົນໃດໜຶ່ງຈະເປັນຍິງ ຫລື ຊາຍທີ່ໄດ້ຮັບຄ່າຕອບແທນຈາກການເຮັດວຽກໃນເຮືອນ ແລະ ບໍລິເວນ ອ້ອມແອ້ມເຮືອນຂອງບຸກຄົນອື່ນ. ຜູ້ອອກແຮງງານບາງເທື່ອກໍ່ເປັນຄົນລາວເອງ ຫລືບາງເທື່ອກໍ່ແມ່ນຄົນຕ່າງດ້າວ (ເຊັ່ນ: ຄົນພະມ້າ, ລາວ ແລະ ກໍາປູເຈຍ).

- ຜູ້ອອກແຮງງານໃນຄົວເຮືອນສ່ວນຫລາຍເປັນແມ່ຍິງ. ຄົນສ່ວນຫຼາຍມັກເຂົ້າໃຈວ່າວຽກຄົວເຮືອນແມ່ນວຽກຂອງ "ແມ່ຍິງ" ເພາະວ່າຕັ້ງແຕ່ຫລາຍເຊັ່ນຄົນມາແລ້ວແມ່ຍິງຈະເປັນຜູ້ແຕ່ງຢູ່ຄົວກິນ, ປັດກວາດເຮືອນຊານ, ເບິ່ງແຍງວຽກບ້ານການເຮືອນ ໂດຍສະເພາະແມ່ນເບິ່ງແຍງເດັກ ນ້ອຍ, ຄົນເຈັບປ່ວຍ ແລະ ຄົນແກ່ຊະລາ.
- ຢູ່ຫຼາຍປະເທດ, ກໍ່ມີຜູ້ຊາຍຫລາຍຄົນເຮັດວຽກເປັນຜູ້ອອກແຮງງານໃນ ຄົວເຮືອນ. ແຕ່ວ່າຜູ້ຊາຍສ່ວນຫລາຍຈະເປັນຄົນຂັບລົດ, ເປັນຄົນຍາມ, ເປັນຄົນສວນ ຫລື ເປັນຜູ້ຊ່ວຍວຽກທົ່ວໄປ.
- ຜູ້ອອກແຮງງານໃນຄົວເຮືອນຈະຖືກໃຊ້ໃຫ້ຊ່ວຍວຽກຄ້າຂາຍ ຫລື ຊ່ວຍວຽກທຸລະກິດຫາລາຍໄດ້ຂອງຄອບຄົວຄືກັນ.

## ໜ້າທີ່ຮັບຜິດຊອບຂອງທ່ານແມ່ນ:

ວຽກງານໃນຄົວເຮືອນແມ່ນໜ້າວຽກທີ່ມີຄຸນປະໂຫຍດຫລາຍ ເພາະເຮັດໃຫ້ເຈົ້າຂອງເຮືອນທີ່ເປັນຜູ້ໃຊ້ແຮງງານມີເວລາໄປເຮັດວຽກຢ່າງອື່ນທີ່ມີລາຍໄດ້ດີ ກວ່າ.

ເມື່ອຜູ້ໃຊ້ແຮງງານ ໄດ້ຈ່າຍຄ່າແຮງງານຢ່າງຖືກຕ້ອງ ແລະ ຕອບສະໜອງເງື່ອນໄຂການເຮັດວຽກທີ່ດີໃຫ້ແກ່ທ່ານໃນນາມເປັນຜູ້ອອກແຮງງານແລ້ວ ຜູ້ໃຊ້ແຮງງານເອງກໍ່ຫວັງໄວ້ວ່າທ່ານເອງຕ້ອງເປັນຄົນດຸໝັ່ນ, ເອົາໃຈໃສ່ວຽກເຮືອນການຊານເປັນຢ່າງດີ, ເປັນຄົນຊື່ສັດ ແລະ ເຮັດວຽກຕາມຄວາມສາມາດເພື່ອເປັນການຕອບແທນ.

ສ່ວນທ່ານເອງກໍ່ຕ້ອງມີຈິດສໍານຶກຢ່າງຮອບຄອບ ແລະ ຕັດສິນໃຈຢ່າງຖືກຕ້ອງກ່ອນທີ່ຈະເຮັດອັນໃດລົງໄປ. ຈົ່ງຄຶດຢູ່ສະເໝີວ່າ ບໍ່ມີສິ່ງໃດຈະສໍາຄັນໄປກວ່າຄວາມປອດໄພສໍາລັບໂຕທ່ານເອງ, ທັງບຸກຄົນທີ່ທ່ານດູແລ ແລະ ເຮືອນທີ່ທ່ານເຮັດວຽກຢູ່ນັ້ນ. ຖ້າຫາກໄດ້ຮັບບາດເຈັບ, ເຮັດເຄື່ອງຕົກເຮ່ຍເສຍຫາຍ ຫລືເກີດອຸປະຕິເຫດໃດໆກໍ່ຕາມ ທ່ານຕ້ອງລາຍງານໃຫ້ຜູ້ໃຊ້ແຮງງານຮູ້ທັນທີ.

**ສິດທິຂອງທ່ານໃນຖານະທີ່ເປັນຜູ້ອອກແຮງງານໃນຄົວເຮືອນ ກໍຄືສິດທິທີ່ຈະຕ້ອງໄດ້ຮັບຄວາມເຄົາລົບນັບຖື ແລະ ເປັນບຸກຄົນທີ່ມີກຽດໃນ ສັງຄົມ, ສິດທິໄດ້ຄ່າແຮງງານທີ່ຢ່າງເໝາະສົມ-ເປັນທຳ, ໄດ້ເຮັດວຽກ ຢ່າງປອດໄພ, ມີເວລາພັກຜ່ອນ ແລະ ມີຄວາມເປັນສ່ວນຕົວ:**

ເວລາພວກເຮົາເວົ້າເຖິງ "ສິດທິ" ພວກເຮົາໝາຍເຖິງສິດທິມະນຸດເຊິ່ງເປັນສິດທິທີ່ທຸກຄົນໄດ້ຮັບຢູ່ໃນການດຳລົງຊີວິດສ່ວນຕົວ ແລະ ການປະກອບອາຊີບຢ່າງ ຖືກຕ້ອງ. ບໍ່ວ່າຈະທຸກຈົນ ຫລື ຮັ່ງມີ, ເປັນໜຸ່ມ ຫລື ເຖົ້າ, ເປັນຍິງ ຫລື ຊາຍ ກໍລ້ວນແຕ່ມີສິດທິເຫລົ່ານີ້ຄືກັນໝົດ.

ເພື່ອຕອບແທນຢາດເຫື່ອແຮງງານຂອງທ່ານ ທ່ານເອງຄວນມີສິດທີ່ຈະໄດ້ຮັບຄ່າແຮງງານຢ່າງເໝາະສົມ-ຍຸຕິທຳ, ໄດ້ເຮັດວຽກໃນສະພາບແວດລ້ອມທີ່ດີ, ທ່ານຍັງມີສິດທີ່ຈະຕິດຕໍ່ພົບພັນກັບຄອບຄົວ ແລະ ໝູ່ເພື່ອນ ແລະ ມີສິດທີ່ຈະອອກໄປນອກເຮືອນຂອງຜູ້ໃຊ້ແຮງງານ ເພື່ອໄປພົບປະຄົນອື່ນໆ ຫຼືໄປສະຖານທີ່ອື່ນໆ ໃນມື້ພັກວຽກຕາມທີ່ຜູ້ໃຊ້ແຮງງານ ແລະ ທ່ານເອງໄດ້ຕົກລົງກັນໄວ້.

ບໍ່ວ່າທ່ານຈະເຮັດວຽກປະເພດໃດ ທ່ານກໍ່ມີສິດທີ່ຈະໄດ້ຮັບການເຄົາລົບນັບຖື ແລະ ໄດ້ຮັບການຄຸ້ມຄອງຕາມຫຼັກສິດທິມະນຸດ, ທ່ານເອງຍັງມີສິດທິທີ່ຈະມີຊີວິດ ແລະ ເຮັດວຽກຢ່າງມີຄຸນຄ່າ ແລະ ມີກຽດສັກສີ ໂດຍປາສະຈາກຈາກການລ່ວງລະເມີດ, ປາສະຈາກການຖືກກົດຂີ່ຂູດຮີດ ແລະ ຖືກເອົາລັດເອົາປຽບ!

## ສິ່ງທີ່ຄວນຕົກລົງກັບຜູ້ໃຊ້ແຮງງານ(ນາຍຈ້າງ)ກ່ອນຈະເຮັດວຽກ:

### ຂອບເຂດວຽກງານທີ່ທ່ານຕ້ອງຮັບຜິດຊອບ ແລະ ສັນຍາແຮງງານ:



- ວຽກປະຈຳວັນຂອງທ່ານມີຫຍັງແດ່? ຜູ້ໃຊ້ແຮງງານຈະເພີ່ມວຽກໃຫ້ທ່ານໂດຍບໍ່ຖາມທ່ານກ່ອນລ່ວງໜ້າໄດ້ຫຼືບໍ່?
- ທ່ານຕ້ອງຮັບຄຳສັ່ງຈາກໃຜແດ່? ມີຜູ້ໃຊ້ແຮງງານພຽງຄົນດຽວ ຫຼືຫຼາຍຄົນ?
- ຖ້າຫາກທ່ານເປັນຜູ້ອອກແຮງງານຕ່າງດ້າວ, ຜູ້ໃຊ້ແຮງງານ (ນາຍຈ້າງ) ຈະເປັນຜູ້ຂໍໃບອະນຸຍາດເຮັດວຽກ ແລະ ໃບອະນຸຍາດເຂົ້າເມືອງໃຫ້ຫຼືບໍ່?
- ຜູ້ໃຊ້ແຮງງານຈະເປັນຜູ້ຂຽນເງື່ອນໄຂການເຮັດວຽກທຸກຢ່າງລົງໃນສັນຍາແຮງງານ ແລະ ທ່ານສາມາດເກັບມ້ຽນໄວ້ໄດ້ຫຼືບໍ່?

## ຄ່າແຮງງານ:

- ທ່ານຈະໄດ້ຮັບຄ່າແຮງງານເປັນເງິນເທົ່າໃດ? ຄ່າແຮງງານຕ່ຳສຸດມີຄວາມແຕກຕ່າງກັນບໍ່ລະຫວ່າງຢູ່ຈັງຫວັດນັ້ນ ແລະ ຈັງຫວັດນີ້, ໃຫ້ຖາມຜູ້ອອກແຮງງານຄົນອື່ນໆນຳອີກ ຫລືວ່າໄທຫາໝາຍເລກໂທລະສັບ 1506 ເພື່ອ ຮັບຊາບຂໍ້ມູນດັ່ງກ່າວນີ້ທີ່ມີການປ່ຽນແປງເປັນແຕ່ລະໄລຍະ.



- ຜູ້ໃຊ້ແຮງງານຈະຈ່າຍຄ່າແຮງງານໃຫ້ທ່ານແບບໃດ? ອາທິດໜຶ່ງຈ່າຍເທື່ອ ໜຶ່ງຫຼືຈ່າຍເປັນລາຍເດືອນ? ຈະໄດ້ຮັບຄ່າແຮງງານໃນວັນດຽວກັນທຸກໆຄັ້ງຫຼືບໍ່? ແລະ ຜູ້ໃຊ້ແຮງງານຈະໃຫ້ເອກະສານເພື່ອເປັນຫຼັກຖານຢັ້ງຢືນໃນການຈ່າຍຄ່າແຮງງານໃຫ້ທ່ານຫຼືບໍ່?

- ທ່ານຈະໄດ້ຮັບຄ່າແຮງງານພຽງສ່ວນໃດສ່ວນໜຶ່ງຫຼືບໍ່? ຄ່າແຮງງານບາງສ່ວນອາດຈະຖືກຫັກອອກເພື່ອເປັນຄ່າໃຊ້ຈ່າຍອື່ນໆເຊັ່ນ: ຄ່າອາຫານ ແລະ ທີ່ພັກຫຼືບໍ່? ຖ້າຫັກ, ເພິ່ນໄດ້ຫັກຄ່າຫຍັງແດ່ ແລະ ເປັນເງິນເທົ່າໃດ?

- ຖ້າຫາກທ່ານເຮັດວຽກລ່ວງເວລາ ຈະໄດ້ຮັບຄ່າແຮງງານເພີ່ມຫຼືບໍ່ ແລະ ເປັນເງິນເທົ່າໃດ?

- ທ່ານຈະຕ້ອງໃຊ້ໜີ້ຄືນໃຫ້ຜູ້ໃຊ້ແຮງງານຫຼືບໍ່? ເປັນໜີ້ຄ່າຫຍັງແດ່ ແລະ ເປັນເງິນເທົ່າໃດ? ເມື່ອໃດຈຶ່ງຈະໃຊ້ໜີ້ໝົດ? ແລະ ຜູ້ໃຊ້ແຮງງານຈະໃຫ້ເອກະສານເພື່ອເປັນຫຼັກຖານຢັ້ງຢືນການຊຳລະໜີ້ຂອງທ່ານໃຫ້ທ່ານເກັບ ມ້ຽນໄວ້ຫຼືບໍ່?

## ມື້ເຮັດວຽກ ແລະ ມື້ພັກຜ່ອນ:

- ທ່ານຕ້ອງເຮັດວຽກມື້ໜຶ່ງຈັກຊົ່ວໂມງ? ແລະ ມີຊົ່ວໂມງພັກຜ່ອນບໍ່?



- ມື້ພັກຂອງທ່ານແມ່ນມື້ໃດ? ໜຶ່ງຄັ້ງຕໍ່ອາທິດບໍ່? ທ່ານສາມາດເລືອກມື້ພັກເອງໄດ້ບໍ່?

- ທ່ານມີມື້ພັກລວມທັງໝົດຈັກມື້ຕໍ່ປີ? ທ່ານສາ ມາດພັກໃນວັນພັກທາງລັດຖະການຫຼືວັນສຳຄັນທາງສາສະໜາໄດ້ຫຼືບໍ່? ແລະ ຍັງໄດ້ຮັບຄ່າແຮງງານໃນວັນພັກດັ່ງກ່າວຫຼືບໍ່?

- ຜູ້ໃຊ້ແຮງງານອະນຸຍາດໃຫ້ຍາດພີ່ນ້ອງ ຫລືໝູ່ຄູ່ມາຢ້ຽມຢາມທ່ານໃນມື້ເຮັດວຽກ ແລະ ໃນຊົ່ວໂມງພັກຜ່ອນໄດ້ຫຼືບໍ່?



## ຖ້າຫາກທ່ານພັກອາໃສຢູ່ໃນຂອບເຂດເຮືອນຂອງຜູ້ໃຊ້ແຮງງານ:

- ໃນມື້ພັກ ແລະ ຫຼັງເລີກວຽກ ທ່ານໄດ້ຮັບອະນຸຍາດໃຫ້ອອກນອກເຮືອນໄດ້ຫຼືບໍ່?

- ທ່ານມີສິດທີ່ຈະໄດ້ຮັບສິ່ງອຳນວຍຄວາມສະດວກ ໃນການເປັນສ່ວນຕົວພາຍໃນເຮືອນຂອງຜູ້ໃຊ້ແຮງ ງານແນວໃດແດ່? ເຊັ່ນ: ຫ້ອງນອນສະເພາະ (ທີ່ສາມາດລ໋ອກປະຕູໄດ້)? ຫ້ອງນ້ຳສະເພາະ ຫຼືຫ້ອງ ນ້ຳລວມ?



- ທ່ານຕ້ອງແຕ່ງຢູ່ຄົວກິນໃຫ້ທຸກຄົນພາຍໃນເຮືອນຫຼືບໍ່? ແລະ ທ່ານຈະໄດ້ ຮັບອະນຸຍາດໃຫ້ກິນເຂົ້າຕອນໃດ? ແລະ ກິນເຂົ້າປາອາຫານຊະນິດດຽວ ກັນກັບຄົນອື່ນໆ ພາຍໃນຄອບຄົວຂອງຜູ້ໃຊ້ແຮງງານຫຼືບໍ່?



- ຕອນກາງຄືນ, ທ່ານຈະຕ້ອງລ້ຽງດູເດັກນ້ອຍ ແລະ ນອນກັບເດັກນ້ອຍທີ່ເປັນລູກຂອງນາຍຈ້າງຫຼືບໍ່? ຕ້ອງໄດ້ເບິ່ງດູແລຜູ້ເຈັບປ່ວຍ, ຄົນພິການ ຫຼື ຜູ້ເຖົ້າ ແກ່ໃນຄອບຄົວຫຼືບໍ່?

- ທ່ານມີໜ້າທີ່ໃນການຮັກສາຄວາມປອດໄພຂອງເຮືອນຜູ້ໃຊ້ແຮງງານຕະຫຼອດ 24 ຊົ່ວໂມງຕໍ່ມື້ຫຼືບໍ່? ຕອນກາງຄືນມີກົດຫ້າມອອກນອກເຮືອນຫຼືບໍ່? ຖ້າມີ, ເພິ່ນຫ້າມອອກເຮືອນຕອນໃດ? ມີ "ກົດຂໍ້ອື່ນໆ ອີກບໍ່" ທີ່ທ່ານຕ້ອງໄດ້ປະຕິບັດອີກ?

- ໃນລະຫວ່າງໄຮງຮຽນພັກ ຜູ້ໃຊ້ແຮງງານບາງຄົນອາດຈະອະນຸຍາດໃຫ້ລູກ ຂອງທ່ານເອງມາຢ້ຽມຢາມ ແລະ ພັກອາໃສຢູ່ນຳຊົ່ວຄາວໄດ້ຫຼືບໍ່? ຖ້າ ຫາກໄດ້ຈະຖືກຫັກຄ່າແຮງງານຫຼືບໍ່?

ການເຮັດວຽກຄົວເຮືອນແມ່ນໜ້າວຽກທີ່ເຮັດຢູ່ພາຍໃນຄົວເຮືອນຂອງນາຍຈ້າງໂດຍທີ່ຄົນພາຍນອກບໍ່ໄດ້ຮັບຮູ້ວ່າມີສິ່ງ ໃດເກີດຂຶ້ນ. ຜູ້ອອກແຮງງານທີ່ພັກອາໃສຢູ່ພາຍໃນເຮືອນ ຂອງຜູ້ໃຊ້ແຮງງານ ອາດຈະຮູ້ສຶກໂດດດ່ຽວ, ດັ່ງນັ້ນເມື່ອທ່ານ ເປັນຜູ້ອອກແຮງງານ ທ່ານຈຶ່ງລືມຄວນມີສະຖານທີ່ສ່ວນຕົວສຳລັບພັກຜ່ອນ ແລະ ເຮັດກິດຈະກຳທີ່ມີຄວາມເປັນສ່ວນຕົວ.

## ຖ້າຫາກທ່ານພັກອາໃສຢູ່ນອກອານາເຂດເຮືອນຂອງຜູ້ໃຊ້ແຮງງານ(ນາຍຈ້າງ):

- ຊົ່ວໂມງເຮັດວຽກຂອງທ່ານຄືກັນທຸກໆມື້ບໍ່? ທ່ານຕ້ອງເຮັດວຽກມື້ໜຶ່ງຈັກຊົ່ວໂມງ?

- ທ່ານມີເວລາພັກກິນເຂົ້າຫຼືບໍ່ ແລະ ໄດ້ກິນເຂົ້າປາອາຫານຂະນິດດຽວກັນກັບຄົນອື່ນໆ ໃນຄອບຄົວຜູ້ໃຊ້ແຮງງານຫຼືບໍ່?



- ໃນລະຫວ່າງໂຮງຮຽນພັກ ຫຼືໃນກໍລະນີສຸກເສີນ ລູກເຕົ້າຂອງທ່ານສາມາດມາຢູ່ກັບທ່ານໃນຕອນກາງເວັນໃນບ່ອນທີ່ທ່ານເຮັດວຽກໄດ້ຫຼືບໍ່?

## ສຸຂະພາບກາຍ ແລະ ສຸຂະພາບຈິດໃຈ:

- ທ່ານໄດ້ຮັບການອົບຮົມເລື່ອງຄວາມປອດໄພທີ່ຈະ ຊ່ວຍທ່ານໃຫ້ຫຼີກເວັ້ນຈາກອຸປະຕິເຫດໄດ້ຢ່າງໃດຫຼືບໍ່? ທ່ານໄດ້ຮັບຄຳແນະນຳຫຼືບໍ່ວ່າຈະເຮັດຢ່າງໃດຖ້າທ່ານຫຼືຄົນທີ່ທ່ານເບິ່ງແຍງຢູ່ນັ້ນເກີດອຸປະຕິເຫດ?



- ຖ້າຫາກທ່ານເຈັບປ່ວຍ ສາມາດໄດ້ຮັບການເບິ່ງແຍງຮັກສາສຸຂະພາບຫຼືບໍ່?
- ຖ້າຫາກທ່ານມີຄວາມຈຳເປັນຕ້ອງໄດ້ພັກວຽກເພື່ອພັກຜ່ອນຫຼືພັກຟື້ນຈາກການເຈັບປ່ວຍ ທ່ານຈະໄດ້ຮັບຄ່າແຮງງານໃນວັນທີ່ພັກວຽກຫຼືບໍ່?
- ແມ່ນໃຜຄືຜູ້ໃຊ້ແຮງງານ (ນາຍຈ້າງ) ຂອງທ່ານ? ຖ້າຫາກທ່ານມີຜູ້ໃຊ້ແຮງງານຫຼາຍຄົນທີ່ສັ່ງວຽກຫຼາຍຢ່າງໃນເວລາດຽວກັນ ອາດເຮັດໃຫ້ທ່ານຮູ້ສຶກ ຫງຸດຫງິດ ຫຼື ບໍ່ພໍໃຈ. ດັ່ງນັ້ນ, ທ່ານຄວນລົມກັບຜູ້ໃຊ້ແຮງງານ (ນາຍຈ້າງ) ຂອງທ່ານໃນເລື່ອງດັ່ງກ່າວນີ້ໃຫ້ຈະແຈ້ງໂດຍໄວທີ່ສຸດ. ເດັກນ້ອຍບໍ່ຄວນສັ່ງວຽກຜູ້ໃຫຍ່ ທ່ານຄວນເປັນຕົວຢ່າງທີ່ດີໃຫ້ເດັກນ້ອຍ ແລະ ພວກເດັກ ນ້ອຍຄວນໄດ້ຮັບການແນະນຳຈາກທ່ານຄືກັນ!



- ຜູ້ໃຊ້ແຮງງານຈະເຮັດປະກັນສຸຂະ ພາບ ແລະ ອຸປະຕິເຫດໃຫ້ທ່ານຫຼືບໍ່? ຖ້າເຮັດໃຫ້ ທ່ານຕ້ອງຈ່າຍຄ່າຊົດເຊີຍປະກັນນີ້ຄືນໃຫ້ຜູ້ໃຊ້ແຮງ ງານຫຼືບໍ່? (ຖ້າຫາກທ່ານແມ່ນຜູ້ອອກແຮງງານຕ່າງດ້າວທີ່ໄດ້ຈົດທະບຽນ ແລະ ມີໃບອະນຸຍາດເຮັດວຽກຢ່າງຖືກຕ້ອງຢູ່ຕ່າງປະເທດ ຈະມີປະກັນສຸຂະພາບ ແລະອຸປະຕິເຫດຢູ່ແລ້ວ).



- ຖ້າທ່ານຫາກຖືພາ ຜູ້ໃຊ້ແຮງງານຈະອະນຸຍາດໃຫ້ທ່ານເຮັດວຽກຕໍ່ໄປຈົນກ່ວາທ່ານຍັງຮູ້ສຶກວ່າເຮັດວຽກໄດ້ຫຼືບໍ່? ຜູ້ໃຊ້ແຮງງານຈະຫຼຸດໜ້າວຽກທີ່ທ່ານເຮັດປົກກະຕິນັ້ນລົງຫຼືບໍ່? ຜູ້ໃຊ້ແຮງງານຈະອະນຸຍາດໃຫ້ທ່ານລາພັກເກີດລູກ ໂດຍບໍ່ຫັກຄ່າແຮງງານຫຼືບໍ່?



## ການເດີນທາງ ແລະ ການຊອກຫາວຽກເຮັດງານທຳ

### ການເດີນທາງຢ່າງປອດໄພເພື່ອຊອກຫາວຽກເຮັດງານທຳ:



**ຮຽນຮູ້ກັບເສັ້ນທາງສັນຈອນເພື່ອຄວາມໝັ້ນໃຈໃນການເດີນທາງ.** ຄວນເລີ່ມສ້າງຄວາມລຶ້ງເຄີຍກັບສະພາບແວດລ້ອມໃໝ່ໆຂອງທ່ານ ຕັ້ງແຕ່ລະຫວ່າງການເດີນທາງ ແລະ ທັນທີທີ່ມາຮອດສະຖານທີ່ເຮັດວຽກໃໝ່ໆ ຫາກຮູ້ສຶກອຶດອັດຫຼືບໍ່ສະບາຍໃຈໃຫ້ເຊື່ອລາງສັງຫອນຂອງຕົນເອງ ແລະຮີບອອກມາຈາກສະຖານທີ່ນັ້ນທັນທີ. ຫາກຕ້ອງການເອົາໄຕຫຼົບໜີຈາກຄົນບໍ່ດີຫຼືຄົນທີ່ຈະມາທຳຮ້າຍທ່ານໃຫ້ເຂົ້າໄປເພິ່ງວັດ, ເພິ່ງສະຖານນີຕຳຫຼວດຫຼືໂຮງໝໍທີ່ໃກ້ທີ່ສຸດ, ເພາະວ່າສະຖານທີ່ເຫຼົ່ານີ້ຈະເປັນບ່ອນເພິ່ງພາທີ່ປອດໄພໄດ້.

**ຊອກຫາຂໍ້ມູນກ່ຽວກັບຜູ້ໃຊ້ແຮງງານ ແລະ ເຮືອນຂອງເຂົາເຈົ້າໃຫ້ຫຼາຍເທົ່າທີ່ຈະຫຼາຍໄດ້ກ່ອນຈະເລີ່ມເຮັດວຽກ.** ຖ້າເປັນໄປໄດ້, ທ່ານອາດຈະສອບຖາມຄົນທີ່ເຊື່ອໃຈເພື່ອໃຫ້ແນ່ໃຈວ່າ ຜູ້ໃຊ້ແຮງງານຄົນນີ້ມີປະຫວັດຢ່າງໃດ ແດ່ກ່ຽວກັບເລື່ອງຈ້າງຄົນມາເຮັດວຽກໃຫ້ ແລະ ການຈ່າຍຄ່າແຮງງານເປັນແນວໃດ? ຖ້າຫາກທ່ານໄດ້ວຽກໂດຍຜ່ານນາຍໜ້າພະຍາຍາມຫາຂໍ້ມູນກ່ຽວກັບປະ ຫວັດຂອງນາຍໜ້າຄົນນັ້ນນຳອີກ. ຕ້ອງຄິດເບິ່ງວ່າໃນບ່ອນທີ່ທ່ານເຮັດວຽກນັ້ນ ທ່ານຈະຕ້ອງເຮັດວຽກຢູ່ໃນສະພາບທີ່ຖືກຕັດຂາດຈາກໂລກພາຍນອກຊ່ຳໃດ? ມີໝູ່ເພື່ອນຫຼືຄົນຮູ້ຈັກອາໄສຢູ່ໃກ້ຄຽງທີ່ທ່ານຈະໄປຂໍຄວາມຊ່ວຍເຫຼືອໄດ້ຫຼືບໍ່? ທ່ານຮູ້ວິທີເດີນທາງອອກຈາກສະຖານທີ່ເຮັດວຽກບ່ອນນີ້ເຖິງບ້ານເກີດເມືອງນອນຂອງທ່ານເອງໄດ້ຫຼືບໍ່?

### ການຕິດຕໍ່ກັບຄອບຄົວ ແລະ ໝູ່ເພື່ອນ ໃນເວລາທີ່ທ່ານໄປເຮັດວຽກ ຢູ່ຕ່າງປະເທດ:



**ບອກໃຫ້ຄອບຄົວຮູ້ກ່ຽວກັບ** ຊື່, ໝາຍເລກໂທລະ ສັບ ແລະ ທີ່ຢູ່ຂອງຜູ້ໃຊ້ແຮງງານ (ນາຍຈ້າງ) ຫລື ນາຍໜ້າ, ຖ້າວ່າມາເຮັດວຽກຜ່ານນາຍໜ້າ). **ຄວນຕິດຕໍ່ກັບຄອບຄົວຫຼືໝູ່ເພື່ອນຢ່າງເປັນປົກກະຕິໃນເວລາໄປເຮັດວຽກໄກຈາກບ້ານເດີມຂອງຕົນ.** ຖ້າຫາກໝູ່ເພື່ອນຫຼືຄອບຄົວທາງບ້ານບໍ່ໄດ້ຮັບຂ່າວຈາກທ່ານໃນຊ່ວງໄລຍະເວລາໃດໜຶ່ງ, ທ່ານກໍຕ້ອງຮີບຮ້ອນຂໍຄວາມຊ່ວຍເຫຼືອທາງທາງຕິດຕໍ່ເຈົ້າໜ້າທີ່ກ່ຽວຂ້ອງທັນທີ (ກະລຸນາເບິ່ງໝາຍເລກໂທລະສັບ ສຳລັບຕິດຕໍ່ໜ່ວຍງານ/ອົງກອນໃຫ້ຄວາມຊ່ວຍເຫລືອໃນດ້ານຫລັງຂອງຄູ່ມື ເຫລັ້ມນີ້).



**ຊອກຫາໝູ່ເພື່ອນໃໝ່ໆ** ໃນສະຖານທີ່ໃໝ່. ພະຍາຍາມພົບປະກັບຄົນອື່ນໆເຊັ່ນ: ຜູ້ທີ່ອອກແຮງງານໃນຄົວເຮືອນນຳກັນ ຫາໂອກາດພົບປະກັບພວກໝູ່ເພື່ອນໃນອາຊີບດຽວກັນເປັນປະຈຳເທົ່າທີ່ຈະເຮັດໄດ້ເພື່ອຊ່ວຍເຫຼືອເຊິ່ງກັນ ແລະ ກັນ ຫຼືໂຮມກຸ່ມກັນໄວ້! ຢ່າລືມຂໍໝາຍເລກໂທລະສັບຂອງກັນແລະກັນໄວ້ ແລະ ໝັ່ນສົ່ງຂໍ້ຄວາມສັ້ນໆຫາກັນເລື້ອຍໆ.

# ຂໍ້ຄວນລະວັງຈະຖືກຄ້າມະນຸດ:

## ຢ່າເຊື່ອໃຈຄົນທີ່ທ່ານບໍ່ລື້ງໜ້າເດັດຂາດ!



ບໍ່ວ່າຈະແມ່ນຜູ້ຍິງ ຫຼືຜູ້ຊາຍ ເຖິງແມ່ນວ່າຄົນຜູ້ນັ້ນຈະມີທ່າທາງທີ່ເປັນມິດກໍ່ຕາມ ຄົນຈຳ ນວນຫຼາຍເຄີຍຖືກຄົນທີ່ຮູ້ຈັກລະຫວ່າງການເດີນທາງຕົວະຍົວະມາຫລາຍ ແລ້ວ ໂດຍການເຂົ້າມາສ້າງຄວາມລື້ງເຄີຍສະ ໜິດສະໜົມແລະສັນຍາວ່າຈະຊອກ "ວຽກສະບາຍ ແລະ ລາຍໄດ້ດີ"ໃນເຮືອນຂອງໃຜຜູ້ໜຶ່ງໃຫ້ເຮັດ. ຄົນຜູ້ນີ້ນອາດຈະຕົວະເລື່ອງຄ່າແຮງງານ ແລະ ສະພາບການເຮັດວຽກ ເຂົາອາດຈະເຮັດວຽກເປັນນາຍໜ້າຊອກຫາຄົນເຮັດວຽກ ແລະ ຈະໄດ້ຮັບເງິນຄ່າຫົວຄິວຈາກເຈົ້າຂອງເຮືອນ (ນາຍຈ້າງ) ເປັນຄ່າຕອບແທນທີ່ຫາຜູ້ອອກແຮງງານຄົນໃໝ່ໃຫ້. ແຮງຈູງໃຈຂອງຄົນຜູ້ນັ້ນຄືຕ້ອງພາເຈົ້າໄປສົ່ງໃຫ້ຜູ້ໃຊ້ແຮງງານໄວທີ່ສຸດເທົ່າທີ່ຈະເຮັດໄດ້.

ແຕ່ວ່າຜູ້ໃຊ້ແຮງງານ (ນາຍຈ້າງ) ອາດຈະຫາເງິນມາຈ່າຍຄ່ານາຍໜ້າທີ່ຕົນ ຈ່າຍໄປແລ້ວກໍ່ຈະຫັກເອົາຈາກຄ່າແຮງງານຂອງທ່ານນັ້ນເອງ ແລະ/ຫຼື ຢຶດເອົາ ເອກະສານສຳຄັນຂອງທ່ານໄວ້ ເປັນຕົ້ນແມ່ນໜັງສືເດີນທາງ, ບັດປະຈຳຕົວ. ຜູ້ໃຊ້ແຮງງານບາງຄົນອາດກັກຂັງຜູ້ອອກແຮງງານ
ໄວ້ໃນເຮືອນຂອງເຂົາໂດຍບໍ່ໃຫ້ອອກໄປໃສໄດ້ເລີຍ ເພາະຍັງຢູ່ໃນໄລຍະທີ່ຕ້ອງຈ່າຍຄ່າໜີ້ສິນທີ່ນາຍໜ້າໄດ້ຕົວະເອົາໄປກ່ອນນັ້ນ.

ທ່ານບໍ່ຄວນມອບເອກະສານຕົ້ນສະບັບແກ່ຜູ້ໃຊ້ແຮງງານ (ນາຍຈ້າງ) ໄວ້ຢ່າງເດັດຂາດເຖິງແມ່ນເຂົາເຈົ້າຈະອ້າງວ່າເພື່ອເອົາໄປເກັບມ້ຽນໄວ້ໃນບ່ອນທີ່ປອດໄພກໍ່ຕາມ. ຈົ່ງໃຫ້ແຕ່ເອກະສານສະບັບສຳເນົາກໍ່ພໍ ເອກະສານຕົ້ນສະບັບນີ້ເປັນສົມບັດຂອງທ່ານຄົນດຽວ ແລະ ເອກະ ສານເຫຼົ່ານີ້ມີຄ່າຫຼາຍ ຖ້າຫາກເຮັດສູນຫາຍໄປກໍ່ເຮັດທົດແທນໃໝ່ຍາກ. ຫາກບໍ່ມີເອກະສານເຫຼົ່ານີ້ທ່ານອາດຈະຕ້ອງກາຍເປັນນັກໂທດໃນຖານະເປັນຄົນເຂົ້າເມືອງຜິດກົດໝາຍ ແລະ ທ່ານກໍຕ້ອງໃຊ້ເອກະສານເຫຼົ່ານີ້ເວລາເດີນທາງກັບບ້ານ ຫຼືເວລາອອກໄປນອກເຮືອນຂອງຜູ້ໃຊ້ແຮງງານ ທ່ານຄວນອັດສຳເນົາເອກະສານເຫຼົ່ານີ້ໄວ້ຫຼາຍໆຊຸດ ແລະ ເກັບສຳຮອງໄວ້ກັບຕົວເພື່ອເວລາທີ່ຕົນເອງເຮັດເອກະສານສະບັບຕົ້ນເສຍຫາຍ

**ເມື່ອໃດທ່ານຕ້ອງການຄວາມຊ່ວຍເຫຼືອ**
**ກະລຸນາເປີດໄປໜ້າຫຼັງຂອງປື້ມຄູ່ມືເຫຼັ້ມນີ້ !**

ຂ້າພະເຈົ້າແມ່ນຜູ້ອອກແຮງງານໃນຄົວ
ເຮືອນ ເຊິ່ງບໍ່ພຽງມີໜ້າທີ່ຮັບຜິດຊອບ
ແຕ່..ກໍ່ມີສິດທີເທົ່າທຽມກັບຜູ້ອື່ນໆ.

ສະນັ້ນ, ຂ້າພະເຈົ້າສົມຄວນໄດ້ຮັບ
ການປະຕິບັດຢ່າງຍຸຕິທຳ... ຄືກັບຜູ້ອອກ
ແຮງງານຄົນອື່ນໆ ແລະ ຂໍຮຽກ
ຮ້ອງໃຫ້ທຸກຄົນຈົ່ງໃຫ້ຄວາມເຄົາລົບ
ໃນກຽດສັກສີ ຂອງຂ້າພະເຈົ້າດ້ວຍ.


ຮູ້ສຶກເຫງົາແທ້ ຄິດຮອດບ້ານນາອີກ
ເບິ່ງແມ້ ໃກ້ຈະໝົດແລ້ວ! ເຈົ້າຄາເຮັດຫຍັງຢູ່? ລູກຂ້ອຍຕ້ອງເຂົ້າແລ້ວໄດ໋ ແລະ ຂ້ອຍກໍ່ຕ້ອງໃຊ້ເງິນ!
ສະບາຍດີ ຂ້ອຍຊື່ໄຊ ຂ້ອຍເຮັດວຽກ ໃນຮ້ານເສີມ ໃກ້ໆກັບເຮືອນທີ່ເຈົ້າ ເຮັດວຽກຢູ່ນີ້ແຫຼະ!
ສະບາຍດີ ຂ້ອຍຊື່ນ້ອຍ ເຈົ້າມັກວຽກໃໝ່ຂອງເຈົ້າບໍ່?
ກໍ່ດີຢູ່ ແຕ່ນາຍຈ້າງ ມັກສັ່ງໃຫ້ເຮັດວຽກໃໝ່ຢູ່ເລື້ອຍໆ
ນາຍຈ້າງຂອງເຈົ້າບໍ່ໄດ້ບອກເຈົ້າກ່ອນບໍ່ວ່າ ໜ້າທີ່ຮັບຜິດຊອບຂອງເຈົ້າມີຫຍັງແດ່?
ບໍ່ເລີຍ ນາຍຈ້າງຈະບອກໃຫ້ ຂ້ອຍເຮັດວຽກໃໝ່ທຸກໆມື້!


ບາງຄົນໄດ້ບໍ່ຄິດວ່າວຽກທີ່ເຮົາເຮັດກໍ່ແມ່ນວຽກງານອາຊີບປະເພດໜຶ່ງ ແຕ່ທີ່ຈິງແລ້ວ
ມັນສຳຄັນ ແລະ ເປັນວຽກທີ່ສຳຄັນຫຼາຍ ເຈົ້າຕ້ອງພະຍາຍາມເຈລະຈາຕໍ່ລອງ
ກັບນາຍຈ້າງຂອງເຈົ້າເພື່ອຄົນຊື່ກັນ...
ນີ້ແມ່ນເບີໂທລະສັບມືຖືຂອງຂ້ອຍ ເຈົ້າເດ ມີເບີໂທລະສັບບໍ່?
ຂອບໃຈເດີ້ ສຳລັບຄຳແນະນຳ ແລ້ວຂ້ອຍຈະລອງເບິ່ງ
ມີ
ດີ! ຊັ້ນຈັ່ງຊີ້ນ ເຈົ້າໂທຫາຂ້ອຍເດີ!
ທ່ານເອີຍ ກະລຸນາຂຽນໜ້າວຽກລະອຽດຂອງຂ້ອຍ ໄວ້ໃນເຈ້ຍໃຫ້ແດ່ໄດ້ບໍ່? ເພາະຂ້ອຍຂີ້ລືມ...
ໄດ້
ເອີ້... ໃສ? ເຈົ້າຮູ້ສຶກດີຂຶ້ນແລ້ວບໍ່?
ດີຂຶ້ນແລ້ວຂອບໃຈເດີ້ ບາງທີມື້ອື່ນເຮົາ ຄົງໄດ້ພົບກັນ


ເຊົ້າມື້ຕໍ່ມາ...
ໃສ ນີ້ແມ່ນລາຍລະອຽດຂອງ ໜ້າວຽກທີ່ເຈົ້າຕ້ອງຮັບຜິດຊອບ ແລະ ຢ່າລືມໄປຕະຫຼາດນຳອີກ
ສະບາຍດີ ນ້ອຍ!
ສະບາຍດີ ໃສ!
ນາຍຈ້າງ ໄດ້ອະທິບາຍໜ້າວຽກທີ່ຂ້ອຍຕ້ອງ ໄດ້ຮັບຜິດຊອບໃຫ້ແລ້ວເດ ແຕ່ຍັງບໍ່ຮູ້ວ່າຈະມີມື້ພັກຜ່ອນຫຼືບໍ່..
ເຈົ້າຕ້ອງລອງຖາມເບິ່ງ! ສຳລັບມື້ພັກຂອງຂ້ອຍແມ່ນວັນອາທິດໄດ໋ ຖ້າເຈົ້າມີມື້ພັກເປັນມື້ດຽວກັນກັບຂ້ອຍສິຈະດີເນາະ ເພາະເຮົາຈະໄດ້ໄປທ່ຽວນຳກັນ
ຈິງຫຼື ຂ້ອຍຈະລອງຖາມເບິ່ງ ແຕ່ຖ້າເຂົາບໍ່ໃຫ້ເດ?
ເຈົ້າຕ້ອງຮູ້ເລື່ອງສິດທິຂອງເຈົ້າເອງໄດ໋! ທຸກຄົນຕ້ອງມີມື້ພັກທັງນັ້ນແຫຼະ


ຕອນແລງມື້ນັ້ນ...
ໃສ ອານນ໌ ໄດ້ເບິ່ງແລ້ວບໍ່?
ໂດຍ ອານແລ້ວ, ຂ້ອຍເຂົ້ານອນ ໄດ້ຢູ່ບໍ່ເນາະ?
ໄດ້, ໄປນອນສາ, ຈັກໜ້ອຍນີ້ຂັ້ນ ເຈົ້າຈະເມື່ອຍໄດ້
ເຈົ້າທ່ານ, ຂ້ອຍຮູ້ສຶກເມື່ອຍ ຂ້ອຍຂໍພັກມື້ໜຶ່ງຕໍ່ອາທິດໄດ້ບໍ່?
ອືມ... ໄດ້, ພັກມື້ ວັນອາທິດ ເນາະ?
ວັນອາທິດ...
ຂ້ອຍຮູ້ສຶກດີຂຶ້ນຫຼາຍເລີຍແຫຼະ ເພາະຕອນນີ້ຂ້ອຍມີມື້ພັກຜ່ອນແລ້ວ!
ດີແທ້, ແລ້ວເຈົ້າຍັງໄດ້ ລົມກັບຍາດທາງໂທລະສັບນຳອີກ
ການທີ່ໄດ້ຕົກລົງກັນກັບນາຍຈ້າງເລື່ອງນີ້ ຖືວ່າຄຸ້ມຄ່າທີ່ສຸດ ແລະ ຕອນນີ້ຂ້ອຍກໍ່ມີສັນຍາແຮງງານ, ແລ້ວວັນອາທິດທີ່ເຮັດວຽກກໍ່ເປັນມື້ເບີກເງິນເດືອນນຳອີກ!

## ເມື່ອໃດທ່ານຕ້ອງການຄວາມຊ່ວຍເຫຼືອຈາກພາຍນອກ

### ໃນຖານະທີ່ເປັນຜູ້ອອກແຮງງານໃນຄົວເຮືອນຄົນໜຶ່ງ ທ່ານມີສິດທີ່ຈະຂໍຄວາມຊ່ວຍເຫຼືອຈາກຄົນພາຍນອກໄດ້ຖ້າ:

- ຜູ້ໃຊ້ແຮງງານ (ນາຍຈ້າງ) ລະເມີດສິດທິຂໍ້ໃດຂໍ້ໜຶ່ງ ທີ່ທ່ານ ແລະ ຜູ້ໃຊ້ແຮງງານໄດ້ຕົກລົງກັນກ່ອນນັ້ນ.
- ເຮັດວຽກໜັກຫລາຍເກີນໄປ ຫຼືບໍ່ເຄີຍມີເວລາໄດ້ພັກຜ່ອນເລີຍ
- ມີໜ້າທີ່ຄວາມຮັບຜິດຊອບຫລາຍເກີນໄປ ເມື່ອສົມທຽບກັບຄ່າແຮງງານ ແລະການອົບຮົມທີ່ທ່ານໄດ້ຮັບ ຕົວຢ່າງ: ຕ້ອງເຮັດວຽກເບິ່ງແຍງຄົນເຈັບປ່ວຍ ຫລືຄົນແກ່ຊະລາທີ່ກັບເປັນນາງພະຍາບານ ຫຼືເປັນແມ່ຄົວມືອາຊີບ.
- ຖືກໄລ່ອອກຈາກວຽກຢ່າງບໍ່ເປັນທຳ ແລະ/ຫຼືຜູ້ໃຊ້ແຮງງານ(ນາຍຈ້າງ) ບໍ່ຍອມຈ່າຍຄ່າແຮງງານໃຫ້.
- ຖືກທຳຮ້າຍຮ່າງກາຍ ຫຼື ລ່ວງລະເມີດທາງເພດ ໂດຍຜູ້ໃຊ້ແຮງງານ, ຫຼືສະມາຊິກຄົນໃດຄົນໜຶ່ງໃນຄອບຄົວ ຫຼືຄົນອື່ນທີ່ເຮັດວຽກຢູ່ໃນເຮືອນດຽວກັນ.
- ຖືກຜູ້ໃຊ້ແຮງງານ (ນາຍຈ້າງ) ຢຶດເອກະສານສຳຄັນ ເຊັ່ນ : ບັດປະຈຳຕົວ ຫຼືເອກະສານກ່ຽວກັບການເຮັດວຽກໄປເກັບມ້ຽນໄວ້.
- ຖືກຜູ້ໃຊ້ແຮງງານ ຫຼືຄົນຂອງຜູ້ໃຊ້ແຮງງານ ບັງຄັບໃຫ້ເຮັດວຽກໂດຍບໍ່ສະໝັກໃຈ ຫຼືຜູ້ໃຊ້ແຮງງານປະຕິເສດສິດທິຂອງທ່ານທີ່ຈະອອກນອກເຮືອນ ໃນເວລາທີ່ກຳນົດບໍ່ໃຫ້ເຮັດວຽກ.

## ສິ່ງທີ່ຄວນເອົາໃຈໃສ່ເປັນພິເສດສຳລັບ ຜູ້ອອກແຮງງານຕ່າງດ້າວ

- ກົດໝາຍໄທ, ຜູ້ອອກແຮງງານໃນຄົວເຮືອນທີ່ເປັນຄົນຕ່າງດ້າວສາມາດເດີນທາງໄປໃສມາໃສໄດ້ສະເພາະພາຍໃນແຂວງ ຫລື ຈັງຫວັດທີ່ຕົນຈົດທະບຽນ ເຮັດວຽກຢູ່ເທົ່ານັ້ນ.
- ຖ້າຜູ້ໃດບໍ່ປະຕິບັດຕາມກົດໝາຍຂໍ້ນີ້ລັດຖະບານສາມາດຖອນ ໃບອະນຸຍາດ ເຮັດວຽກໄດ້ທັນທີ ແລະຜູ້ອອກແຮງງານຄົນນັ້ນຈະບໍ່ສາມາດພັກອາໃສ ແລະ ເຮັດວຽກຢູ່ໃນຕ່າງປະເທດໄດ້ອີກ ແລະຈະຕ້ອງຖືກສົ່ງຕົວກັບຄືນປະ ເທດໂດຍໄວ.
- ຜູ້ອອກແຮງງານໃນຄົວເຮືອນ ອາດຈະເດີນທາງໄປຕ່າງແຂວງ ຫລື ຕ່າງຈັງຫວັດອື່ນໆໄດ້ໂດຍຕ້ອງມີຜູ້ໃຊ້ແຮງງານ (ນາຍຈ້າງ) ຫລື ຄູ່ສົມລົດຂອງນາຍຈ້າງ ຕິດຕາມໄປນຳເທົ່ານັ້ນ.

ການຍົກຍ້າຍຈາກຊົນນະບົດເຂົ້າມາສູ່ຕົວເມືອງອາດໃຫ້ຜົນຕອບແທນທີ່ດີ ແລະ ໜ້າຕື່ນເຕັ້ນ  ແຕ່ໃນເວລາດຽວກັນກໍ່ເປັນຕາໜ້າຢ້ານນຳອີກ. ຄວນລະວັງຕົວ ແລະ ມີສະຕິເຖິງຄວາມປອດໄພຂອງຕົນເອງກ່ອນເປັນອັນດັບທຳອິດບໍ່ວ່າສະຖານະພາບຂອງເຮົາຈະເປັນຢ່າງໃດ  ເຮົາມີສິດທີ່ທີ່ຈະໄດ້ຮັບຄວາມຊ່ວຍເຫຼືອເມື່ອຕົກຢູ່ໃນສະພາບອັນຕະລາຍນີ້ແມ່ນ ສິດທິໃນຖານະທີ່ເປັນມະນຸດຄົນໜຶ່ງ ແລະ ເຈົ້າໜ້າທີ່ຂອງລັດມີໜ້າທີ່ທີ່ຈະປົກປ້ອງຄຸ້ມຄອງ ທ່ານຕະຫລອດເວລາ.

## ສິ່ງທີ່ຄວນເອົາໃຈໃສ່ສຳລັບຜູ້ອອກແຮງງານເດັກຕ່າງດ້າວ

**ເດັກນ້ອຍບໍ່ວ່າຈະແມ່ນເດັກນ້ອຍໄທ ຫລືເດັກນ້ອຍຕ່າງດ້າວທີ່ມີອາຍຸຕ່ຳກວ່າ 15 ປີ ບໍ່ໄດ້ຮັບອະນຸຍາດໃຫ້ເຮັດວຽກເປັນຜູ້ອອກແຮງງານໃນຄົວເຮືອນເດັດຂາດ.**

ເດັກນ້ອຍທີ່ມີອາຍຸຫລາຍກວ່າ 15 ປີ ແຕ່ຍັງບໍ່ຮອດ 18 ປີ ສາມາດເຮັດວຽກໄດ້ແຕ່ເຮັດໄດ້ສະເພາະວຽກເບົາເທົ່ານັ້ນ. ນີ້ແມ່ນມາດຖານແຮງງານສາກົນຂອງອົງ ການແຮງງານສາກົນ ແລະ ເປັນໄປຕາມກົດໝາຍແຮງງານຂອງໄທ.

ຖ້າຫາກຕົນເອງມີອາຍຸຢູ່ໃນລະຫວ່າງນີ້ແລ້ວ, ກໍ່ຕ້ອງຖາມຜູ້ໃຊ້ແຮງງານເບິ່ງວ່າ ຕົນເອງຈະໄດ້ມີໂອກາດໄດ້ໄປໂຮງຮຽນ ແລະ ຮຽນຮູ້ທັກສະໃໝ່ໆຕື່ມອີກບໍ່?

ເນື່ອງຈາກວ່າເດັກນ້ອຍມີຄວາມສ່ຽງສູງຕໍ່ການຄ້າມະນຸດການສະແຫວງຫາຜົນ ປະໂຫຍດດ້ານແຮງງານ ແລະ ການກົດຂີ່ຂູດຮີດທາງເພດ, ລັດຖະບານໄທ ຈຶ່ງໄດ້ເຕືອນຜູ້ອອກແຮງງານທຸກຄົນທີ່ມີອາຍຸຕ່ຳ ກ່ວາ 18 ປີ ວ່າບໍ່ຄວນເດີນທາງເຂົ້າມາປະເທດໄທເພື່ອຊອກວຽກເຮັດດ້ວຍຕົວເອງ ຍົກເວັ້ນຈະເດີນທາງເຂົ້າມາພ້ອມພໍ່ແມ່ ຫລືຜູ້ປົກຄອງທີ່ຖືກຕ້ອງຕາມກົດໝາຍເທົ່ານັ້ນ (ເຊັ່ນ : ບໍ່ແມ່ນເປັນພຽງໝູ່ຄູ່ຫລືຄົນຮູ້ຈັກທີ່ເປັນຜູ້ໃຫຍ່).

## ສິ່ງທີ່ຄວນລະວັງອື່ນໆ:

ຜູ້ໃຊ້ແຮງງານ (ນາຍຈ້າງ) ສ່ວນຫຼາຍເຫັນຄຸນຄ່າຂອງວຽກທີ່ຜູ້ອອກແຮງງານ ຂອງຕົນເຮັດ.
ຜູ້ໃຊ້ແຮງງານ (ນາຍຈ້າງ) ສ່ວນຫຼວງຫຼາຍກໍ່ໄດ້ຕອບແທນຄ່າແຮງງານຢ່າງຍຸຕິທຳ,
ໃຫ້ມີມື້ພັກໃນແຕ່ລະອາທິດ, ໃຫ້ເວລາພັກ ຜ່ອນໃນມື້ເຮັດວຽກ, ໃຫ້ຄວາມເປັນສ່ວນຕົວ (ເຊັ່ນ : ມີຫ້ອງສ່ວນຕົວ) ເຮັດປະກັນສຸຂະພາບ ແລະ ການເດີນທາງໃຫ້ແກ່ຜູ້ອອກແຮງງານ.

ແຕ່ຜູ້ໃຊ້ແຮງງານ (ນາຍຈ້າງ) ບາງຄົນເອົາລັດເອົາປຽບ, ເຮັດໃຫ້ສະພາບການເຮັດວຽກຂອງຜູ້ອອກແຮງງານໃນຄົວເຮືອນໂດດດ່ຽວ, ບໍ່ຈ່າຍຄ່າແຮງງານໃຫ້, ບໍ່ມີມື້ພັກຜ່ອນ ຫຼືບໍ່ອະນຸຍາດໃຫ້ຜູ້ອອກແຮງງານໃນຄົວເຮືອນ ອອກນອກເຮືອນ. ຮ້າຍແຮງກວ່ານັ້ນ, ຜູ້ອອກແຮງງານທີ່ໄປອອກແຮງງານແບບບໍ່ຖືກຕ້ອງຢູ່ຕ່າງປະເທດບາງຄົນຍັງມີຄວາມສ່ຽງຕໍ່ການຖືກກົດຂີ່ຂູດ ຮີດຫຼາຍທີ່ສຸດ, ເພາະວ່າພວກເຂົາເຈົ້າບໍ່ມີໃບອະນຸຍາດເຮັດວຽກ ຫຼືບໍ່ມີໃບ ອະນຸຍາດພັກເຊົາຢູ່ໃນຕ່າງປະເທດຢ່າງຖືກຕ້ອງ.

**ພວກເຮົາຈະຮູ້ໄດ້ຢ່າງໃດວ່າເຮົາເອງໄດ້ຮັບການປະຕິບັດຢ່າງບໍ່ເປັນທຳ:**

**ໃນກໍລະນີທີ່ຮ້າຍແຮງທີ່ສຸດ ແມ່ນເປັນຜູ້ຖືກກົດຂີ່ຂູດຮີດໃນລັກສະນະເປັນແຮງງານບັງຄັບ ແລະ/ຫຼືແຮງງານຂ້າທາດ.**

ຕົວຢ່າງເຊັ່ນ: ຫາກຜູ້ໃຊ້ແຮງງານ (ນາຍຈ້າງ) ປະຕິເສດບໍ່ຍອມຈ່າຍຄ່າແຮງງານໃຫ້ທ່ານ ຫຼື ບໍ່ອະນຸຍາດໃຫ້ທ່ານອອກນອກເຮືອນ, ກັດໜ່ວງ, ຕົວະຍົວະ ຫຼືບັງຄັບ (ໂດຍການນາບຂູ່, ທຳຮ້າຍ ແລະ ລ່ວງລະເມີດທາງ ເພດ). ຜູ້ໃຊ້ແຮງງານຍຶດ ເອົາເອກະສານສຳຄັນສ່ວນຕົວ (ເຊັ່ນ : ບັດປະຈຳຕົວ, ໜັງສືຜ່ານແດນ, ໃບອະນຸຍາດເຮັດວຽກ) ຂອງທ່ານໄປ ເກັບມ້ຽນໄວ້ ເພາະວ່າສິ່ງເຫຼົ່ານີ້ເປັນສິນບັດສ່ວນຕົວທີ່ສຳຄັນຂອງທ່ານຄົນດຽວເທົ່ານັ້ນ.

ຖ້າທ່ານປະສົບຫຼືພົບກັບການກົດຂີ່ຂູດຮີດດັ່ງກ່າວ ທ່ານມີສິດທີ່ຈະແຈ້ງຄວາມຕໍ່ເຈົ້າໜ້າທີ່ທາງການຂອງໄທ ແລະ ພວກເຂົາເຈົ້າມີໜ້າທີ່ຊ່ວຍເຫຼືອທ່ານ ຫຼືແຈ້ງພາກສ່ວນກ່ຽວ ຂ້ອງອື່ນໆ (ຕາມລາຍຊື່ຢູ່ ດ້ານຫລັງຂອງປຶ້ມຄູ່ມືເຫຼັ້ມນີ້) ກໍ່ສາມາດຊ່ວຍ ທ່ານໄດ້ເຊັ່ນກັນ.



ຖ້າຫາກທ່ານຖືກຈັບ (ເພາະວ່າບໍ່ມີ LA ວີຊ່າ ຫຼື ໃບອະນຸຍາດເຮັດວຽກ) ທ່ານຍັງມີສິດທີ່ຈະໄດ້ຮັບຄ່າແຮງງານທີ່ທ່ານໄດ້ເຮັດ ສຳເລັດໄປແລ້ວ! ຫາກມີຂໍ້ສົງໄສກະລຸນາ ຕິດຕໍ່ພາກສ່ວນທີ່ມີ ລາຍຊື່ໃນຕອນທ້າຍຂອງໜັງສືເຫຼັ້ມນີ້ທ່ານສາມາດຂໍຄວາມຊ່ວຍເຫຼືອໄດ້.

ຂໍຄວາມຊ່ວຍເຫຼືອຈົດທະບຽນ ແລະ ໃບອະນຸຍາດເຮັດວຽກ ກະລຸນາໂທໄປທີ່ໝາຍ ເລກ 1506 (ໂທຕັ້ງໂຕະ/ຫຼື ມືຖື ໃນປະເທດໄທເທົ່ານັ້ນ).

ຖ້າຫາກທ່ານຕົກຢູ່ໃນພາວະອັນຕະລາຍຫຼືພາວະສຸກເສີນ ໂທໄປທີ່ໝາຍເລກ 1300 (ໂທຕັ້ງໂຕະ/ຫຼືມືຖືໃນປະເທດໄທເທົ່ານັ້ນ) ບໍ່ຕ້ອງເປັນຫ່ວງວ່າ ທ່ານຈະເຂົ້າເມືອງ "ຖືກກົດໝາຍ" ຫຼືວ່າບໍ່ໄດ້ຈົດທະບຽນເປັນຜູ້ອອກແຮງງານຢ່າງຖືກຕ້ອງ ທ່ານຈະໄດ້ຮັບການຊ່ວຍເຫຼືອທັນທີ.

## ການຂໍຄວາມຊ່ວຍເຫຼືອຈາກພາກສ່ວນອື່ນ ຢູ່ໃນປະເທດໄທ

ທ່ານສາມາດຕິດຕໍ່ສະຫະພັນກຳມະບານ ແລະ ອົງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດ ຖະບານຖ້າຫາກທ່ານຕ້ອງການຂໍຄວາມຊ່ວຍເຫລືອ ແຕ່ຖ້າບໍ່ກ້າຕິດຕໍ່ກັບເຈົ້າໜ້າທີ່ທາງການ, ທ່ານກໍ່ສາມາດຕິດຕໍ່ກັບອົງກອນເຫລົ່ານີ້ໄດ້ **ໂດຍບໍ່ຕ້ອງຢ້ານ** ວ່າຈະຖືກຈັບສົ່ງກັບຄືນປະເທດ.

| ອົງກອນ | ໂທລະສັບ # | ພາສາ | ທີ່ຕັ້ງ |
|---|---|---|---|
| ມູນນິທິ ເອັມ ເອ ພີ (MAP Foundation) | 053 811 202<br>053 271 551 | ພະມ້າ, ກະຫຼ່ຽນ, ສານ ແລະ ໄທ | ພາກເໜືອ, ປະເທດໄທ |
| ເຄືອຄ່າຍສົ່ງເສີມຄຸນ ນະພາບຊີວິດແຮງງານ (LPN) | 034 434 267 | ພະມ້າ, ໄທ | ພາກກາງ ປະທດໄທ |
| ມູນນິທິເພື່ອການພັດ ທະນາເດັກ (FCD) | 02 435 5281 | ພະມ້າ, ລາວ, ໄທ | ພາກກາງ ປະເທດໄທ |
| ຄະນະກຳມະການສົ່ງເສີມປະຊາທິປະໄຕໃນ ພະມ້າ(TACDB) | 02 216 4463 | ພະມ້າ, ໄທ | ພາກກາງ ປະເທດໄທ |
| ມູນນິທິເພື່ອສິດທິມະ ນຸດ ແລະ ການພັດທະ ນາ (HRDF) | 053 223 077<br>081 595 7578 | ພະມ້າ, ມອນ, ສານ, ໄທ, ອັງກິດ | ພາກເໜືອ ປະເທດໄທ |
| Home Net | 02 513 9242 | ໄທ ແລະ ອັງກິດ | ກຸງເທບ |
| ສະຫະພັນແມ່ຍິງ | 02 433 5149 | ໄທ ແລະ ອັງກິດ | ກຸງເທບ |
| ສະມາຄົມຜູ້ອອກແຮງງານໃນຄົວເຮືອນ ຂອງກະ ຫລ່ຽນ | 081 348 3479 | ກະຫລ່ຽນ, ຊາໂກ້, ໄທ | ທົ່ວປະເທດ |
| ສະຫະພັນກຳມະບານ. ພະມ້າ (FTUB) | 081 642 2296 | ພະມ້າ, ກະຫຼ່ຽນ, ມອນ, ໄທ | ທົ່ວປະເທດ |
| ອົງການແຮງງານແຫ່ງປະເທດໄທ (LCT) | 02 758 3300 | ໄທ | ກຸງເທບ |
| ອົງການກຳມະບານ ແຫ່ງປະເທດໄທ (TTUC) | 02 384 0438 | ໄທ | ກຸງເທບ |
| ອົງການຜູ້ໃຊ້ແຮງງານພາກອຸດສາຫະກຳແຫ່ງ ຊາດ (NCPE) | 02 932 9870 | ໄທ | ກຸງເທບ |
| ສະຫະພັນຜູ້ອອກແຮງ ງານພາກລັດວິສາຫະ ກິດ (SERC) | 02 537 8973 | ໄທ | ກຸງເທບ |
| ແຮງງານໄທ (TLSC) | 02 251 3137 | ໄທ | ກຸງເທບ |

## ທ່ານສາມາດຕິດຕໍ່ໜ່ວຍງານລັດຖະບານ

ຖ້າຫາກທ່ານເຫັນວ່າຕົນເອງຈະໄດ້ຮັບອັນຕະລາຍ ຄວນຕິດຕໍ່ເຈົ້າໜ້າທີ່ທາງການຂອງໄທ ຫລື ສະຖານກົງສູນຂອງລາວຢູ່ໄທດັ່ງຕໍ່ໄປນີ້ :

| ໜ່ວຍງານ | ໂທລະສັບ # | ພາສາ |
|---|---|---|
| ສຳລັບຄວາມຊ່ວຍເຫຼືອທັນທີ | 1300 | ໄທ |
| ຕຳຫຼວດ | 191 | ໄທ |
| ຕຳຫຼວດທ່ອງທ່ຽວ | 1155 | ໄທ, ອັງກິດ |
| ຂໍຄວາມຊ່ວຍເຫຼືອດ້ານການລະເມີດສັນຍາ ແລະ ໃບອະນຸຍາດເຮັດວຽກ | 1506 | ໄທ |
| ພະແນກກົງສູນ, ສະຖານທູດລາວ ໃນກຸງເທບ (ບາງກອກ) | 02 539 6667-8<br>ຕໍ່ໝາຍເລກ 109 | ລາວ, ໄທ, ອັງກິດ |
| ກົງສູນກຳປູເຈຍ ໃນກຸງເທບ (ບາງກອກ) | 02 957 5851-2 (ວັນຈັນ-ວັນສຸກ)<br>02 957 5886 (ບັນຫາແຮງງານ)<br>081 826 8551 (ຫຼັງໂມງເຮັດວຽກ ແລະ ກໍລະນີສຸກເສີນ) | ຂະແມ, ໄທ, ອັງກິດ |



**ການໂທລະສັບກັບປະເທດ:** ຫາກທ່ານອາໃສຢູ່ໃນປະເທດໄທ ແລະ ຕ້ອງການຈະໂທລະສັບກັບປະເທດຂອງຕົວເອງ ຕ້ອງກົດລະຫັດສຳລັບໂທທາງໄກຕ່າງປະເທດກ່ອນ (ຈາກປະເທດໄທ ໝູນ 001) ຈາກນັ້ນກົດລະຫັດປະເທດຂອງຕົນ: ປະເທດກຳປູເຈຍ ໝູນ 855, ສຳລັບ ສປປ ລາວ ໝູນ 856 ແລະ ປະເທດພະມ້າ ໝູນ 95, ຕາມດ້ວຍກົດລະຫັດປະຈຳທ້ອງຖິ່ນ ແລະ ໝາຍເລກໂທລະສັບ.

## ໝາຍເລກໂທລະສັບຂອງຄອບຄົວ ແລະ ໝູ່ເພື່ອນ:

1.

2

3.

4.

5.

6.

7.

## ບັນທຶກ:

ອົງກອນທີ່ມອບຄູ່ມືເຫລັ້ມນີ້ໃຫ້ກັບທ່ານ
ອາດຈະໃຫ້ຄຳແນະນຳ ແລະ ໃຫ້ຄວາມຊ່ວຍເຫລືອເພີ່ມເຕີມໄດ້

ຄູ່ມືເຫລັ້ມນີ້ ເປັນສ່ວນໜຶ່ງຂອງ ໂຄງການສົ່ງເສີມ
"ການເດີນທາງຢ່າງສະຫລາດ-ເຮັດວຽກຢ່າງສະຫລາດ"
ເຊິ່ງເປັນສ່ວນໜຶ່ງຂອງໂຄງການ ການສ້າງວຽກທີ່ມີຄຸນຄ່າ-ເປັນທຳ
ຂອງອົງການແຮງງານສາກົນ ໃນພາກພື້ນອາຊີ ແລະ ປາຊີຟິກ

ທ່ານແມ່ນຜູ້ອອກແຮງງານໃນຄົວເຮືອນທີ່ອາໄສຢູ່ໃນປະເທດໄທຫຼືບໍ່?
ບໍ່ວ່າຈະເປັນເດັກນ້ອຍ ຫຼືຜູ້ໃຫຍ່ ຄົນໄທ ຫຼືຄົນຕ່າງດ້າວ ຜູ້ຊາຍ ຫຼືຜູ້ຍິງ

ທ່ານມີໜ້າທີ່ຮັບຜິດຊອບ ແລະ ມີສິດທິເທົ່າທຽມກັນ!

ການຮູ້ເລື່ອງເຫຼົ່ານີ້ ຈະຊ່ວຍໃຫ້ທ່ານຫຼີກເວັ້ນຈາກການຖືກທຳຮ້າຍ ແລະ
ຖືກເອົາລັດເອົາປຽບຈາກການຈ້າງງານ.

ຄູ່ມືເຫຼັ້ມນີ້ຈະໃຫ້ຄຳແນະນຳວ່າ ທ່ານຈະເດີນທາງ ແລະ ເຮັດວຽກຢູ່ໃນ
ເມືອງໄທຢ່າງປອດໄພໄດ້ຢ່າງໃດ ຈະຫຼີບຫຼີກຈາກນາຍໜ້າ ແລະ ຜູ້ໃຊ້ແຮງງານ (ນາຍຈ້າງ)
ທີ່ເອົາລັດເອົາປຽບໄດ້ຢ່າງໃດ ແລະ ຈະໄປ ເພິ່ງໃຜໃນເວລາທີ່ຕ້ອງການຂໍຄວາມຊ່ວຍເຫຼືອ

ຈົ່ງຢ່າຢ້ານກົວ-ແຕ່ຕ້ອງລະມັດລະວັງ!
ບໍ່ມີຫຍັງສາຍເກີນໄປທີ່ທ່ານຈະຫາທາງແກ້ໄຂໄດ້ ເຖິງແມ່ນວ່າ
ທ່ານກຳລັງປະສົບກັບການຖືກກົດຂີ່ຂູດຮີດຢູ່ໃນຕອນນີ້ກໍ່ຕາມ!



*ເຮັດວຽກຢ່າງສະຫຼາດ – ຈຶ່ງຈະມີຊີວິດຢູ່ຢ່າງປອດໄພ!*

ຄູ່ມືເຫຼັ້ມນີ້ມີໄວ້ສຳລັບແຈກຢາຍໃຫ້ຜູ້ອອກແຮງງານໃນຄົວເຮືອນ ແລະ
ຜູ້ອອກແຮງງານຕ່າງດ້າວຢູ່ໃນປະເທດໄທ ໂດຍບໍ່ເສຍຄ່າ

Copyright © International Labour Organization 2009

ASIAN DECENT WORK DECADE 2006 2015

ISBN: 9789228229721